ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເລກທີ 2509 /ຮສສ
ນະຄອນຫຼວງວຽງຈັນ, ວັນທີ 06/08/26

# ຂໍ້ຕົກລົງ

## ວ່າດ້ວຍ ມາດຕະຖານດ້ານຄວາມຮ້ອນ, ແສງສະຫວ່າງ ແລະ ສຽງ ໃນສະຖານທີ່ເຮັດວຽກກ່ຽວຂ້ອງກັບຄວາມປອດໄພ ແລະ ສຸຂະພາບແຮງງານ

- ອີງຕາມ ກົດໝາຍວ່າດ້ວຍແຮງງານ ສະບັບເລກທີ 43/ສພຊ, ລົງວັນທີ 24 ທັນວາ 2013;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ 111/ນຍ, ລົງວັນທີ 30 ເມສາ 2026;
- ອີງຕາມ ດຳລັດວ່າດ້ວຍການຄວາມປອດໄພ ແລະ ສຸຂະພາບແຮງງານ ສະບັບ22/ລບ, ລົງວັນທີ 05 ກຸມພາ 2019.

## ລັດຖະມົນຕີ ອອກຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ມາດຕະຖານດ້ານຄວາມປອດໄພ ແລະ ສຸຂະພາບແຮງງານ ກ່ຽວກັບຄວາມຮ້ອນ, ແສງສະຫວ່າງ ແລະ ສຽງ ໃນສະຖານທີ່ເຮັດວຽກ ເພື່ອປ້ອງກັນຄວາມສ່ຽງຈາກການເກີດອຸປະຕິເຫດແຮງງານ ແລະ ພະຍາດອາຊີບອາດຈະເກີດຂຶ້ນຈາກການເຮັດວຽກ, ແນໃສ່ການປັບປຸງສະພາບແວດລ້ອມຂອງການເຮັດວຽກໃຫ້ດີຂຶ້ນ, ຮັບປະກັນຄວາມປອດໄພ ແລະ ສຸຂະພາບຂອງຜູ້ອອກແຮງງານ ແລະ ປະກອບສ່ວນໃນການຍົກສູງຜະລິດຕະພາບແຮງງານ.

### ມາດຕາ 2 ມາດຕະຖານຄວາມປອດໄພ ແລະ ສຸຂະພາບແຮງງານ ກ່ຽວກັບຄວາມຮ້ອນ, ແສງສະຫວ່າງ ແລະ ສຽງ ໃນສະຖານທີ່ເຮັດວຽກ

ມາດຕະຖານຄວາມປອດໄພ ແລະ ສຸຂະພາບແຮງງານ ກ່ຽວກັບຄວາມຮ້ອນ, ແສງສະຫວ່າງ ແລະ ສຽງໃນສະຖານທີ່ເຮັດວຽກ ແມ່ນ ມາດຕະຖານກ່ຽວກັບ ການກຳນົດຄ່າ ຫຼື ລະດັບ ຄວາມຮ້ອນ ຄວາມແຈ້ງສະຫວ່າງ ແລະ ສຽງດັງໃນສະຖານທີ່ເຮັດວຽກ ເພື່ອເປັນມາດຖານ ໃຫ້ຜູ້ໃຊ້ແຮງງານ ແລະ ຜູ້ອອກແຮງງານປະຕິບັດວຽກຄວາມປອດໄພ ແລະ ສຸຂະພາບແຮງງານ.

ມາດຕາ 3 ການອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ລະດັບຄວາມຮ້ອນ** ໝາຍເຖິງ ອຸນຫະພູມໃນບໍລິເວນທີ່ຜູ້ອອກແຮງງານເຮັດວຽກ ວັດແທກ ໂດຍຄ່າສະເລ່ຍໃນຊ່ວງເວລາ ສອງຊົ່ວໂມງທີ່ມີອຸນຫະພູມສູງສຸດຂອງການເຮັດວຽກປົກກະຕິ ມີຫົວໜ່ວຍວັດແທກເປັນອົງຊາເຊ ( ˚C );

2. **ແສງສະຫວ່າງ** ແມ່ນຄືນໄຟຟ້າແມ່ເຫຼັກຊະນິດໜຶ່ງ ເປັນອົງປະກອບສຳຄັນໃນການເບິ່ງເຫັນ ຈຳເປັນຕ້ອງມີແສງສະຫວ່າງພຽງພໍມີຫົວໜ່ວຍວັດແທກເປັນລັກ ( LUX);

3. **ສຽງດັງ** ໝາຍເຖິງ ສຽງທີ່ມີຄວາມດັງຈົນອາດກໍ່ໃຫ້ເກີດອັນຕະລາຍຕໍ່ລະບົບການໄດ້ຍິນຂອງຜູ້ອອກແຮງງານ ມີຫົວໜ່ວຍວັດແທກເປັນເດຊີເບລເອ (dB(A) );

4. **ສະພາບແວດລ້ອມໃນການເຮັດວຽກ** ໝາຍເຖິງ ເງື່ອນໄຂຂອງວຽກ ທີ່ສ້າງຜົນກະທົບຕໍ່ສຸຂະພາບທາງດ້ານຮ່າງກາຍ, ມັນສະໝອງ ແລະ ຈິດໃຈຂອງຜູ້ອອກແຮງງານ ຊຶ່ງປະກົດຢູ່ໃນບໍລິເວນບ່ອນເຮັດວຽກຂອງຜູ້ອອກແຮງງານເຊັ່ນ: ເຄື່ອງຈັກ, ອາຄານ, ສະຖານທີ່, ການລະບາຍອາກາດ, ຄວາມຮ້ອນ, ແສງສະຫວ່າງ ສຽງ, ກິ່ນ, ອາຍ, ຂີ້ຝຸ່ນ, ມົນລະພິດ, ການສັ່ນສະເທືອນ, ອຸປະກອນ ແລະ ສິ່ງອຳນວຍຄວາມສະດວກ;

5. **ວຽກເບົາ** (Light Work) ໝາຍເຖິງ ລັກສະນະຂອງວຽກທີ່ໃຊ້ແຮງງານນ້ອຍ ຫຼື ໃຊ້ພະລັງງານທີ່ເຮັດໃຫ້ເກີດການເຜົາຜານພະລັງງານບໍ່ເກີນ 200 ກິໂລກະລໍລີຕໍ່ຊົ່ວໂມງ ເຊັ່ນ: ການເຮັກວຽກໃນຫ້ອງການ, ວຽກຫຍິບຈັກ, ວຽກກວດສອບຄຸນນະພາບ, ວຽກປະກອບວັດສະດຸຂະໜາດນ້ອຍ, ຄວບຄຸມເຄື່ອງຈັກ, ຍ່າງດ້ວຍຄວາມໄວບໍ່ເກີນ 3,2 ກິໂລແມັດຕໍ່ຊົ່ວໂມງ ຫຼື ວຽກອື່ນທີ່ໃກ້ຄຽງກັບວຽກງານດັ່ງກ່າວ;

6. **ວຽກໜັກ** (Heavy Work) ໝາຍເຖິງ ລັກສະນະວຽກທີ່ໃຊ້ແຮງຫຼາຍ ຫຼື ໃຊ້ພະລັງງານທີ່ເຮັດໃຫ້ເກີດການເຜົາຜານພະລັງງານເກີນ 350 ກິໂລກະລໍລີ ຕໍ່ຊົ່ວໂມງ ເຊັ່ນ: ວຽກທີ່ຂຸດ, ຕັດ, ວຽກເລື່ອຍໄມ້, ເຈາະໄມ້ເນື້ອແຂງ, ວຽກທຸບໂດຍໃຊ້ຄ້ອນຂະໜາດໃຫຍ່, ວຽກເຄື່ອນຍ້າຍເຄື່ອງໜັກຂຶ້ນບ່ອນສູງ ຫຼື ບ່ອນຊັນ ລາກ ຫຼື ຍົກສິ່ງຂອງທີ່ມີນ້ຳໜັກຫຼາຍກວ່າ 20 ກິໂລກຼາມ, ຫຼື ວຽກອື່ນທີ່ໃກ້ຄຽງກັບວຽກງານດັ່ງກ່າວ;

ມາດຕາ 4 ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບຜູ້ອອກແຮງງານ ແລະ ຜູ້ໃຊ້ແຮງງານໃນການຄຸ້ມຄອງຄວາມປອດໄພ ແລະ ສຸຂະພາບແຮງງານ ກ່ຽວກັບຄວາມຮ້ອນ, ແສງສະຫວ່າງ ແລະ ສຽງ ໃນສະຖານທີ່ເຮັດວຽກ ໃນທຸກຫົວໜ່ວຍການຜະລິດ, ທຸລະກິດ ແລະ ການບໍລິການ ທັງໃນລະບົບ ແລະ ນອກລະບົບຂອງທຸກພາກສ່ວນເສດຖະກິດ-ສັງຄົມໃນ ສປປ ລາວເຂດທົ່ວປະເທດ.

## ໝວດທີ 2
## ມາດຕະຖານຄວາມຮ້ອນ

ມາດຕາ 5 ມາດຕະຖານຄວາມຮ້ອນ

ຜູ້ໃຊ້ແຮງງານຕ້ອງຄວບຄຸມ ແລະ ຮັກສາລະດັບຄວາມຮ້ອນພາຍໃນສະຖານທີ່ເຮັດວຽກທີ່ມີຜູ້ອອກແຮງງານເຮັດວຽກບໍ່ໃຫ້ເກີນຄ່າມາດຕະຖານດັ່ງນີ້:

1. ວຽກທີ່ຜູ້ອອກແຮງງານເຮັດໃນລັກສະນະວຽກເບົາ ຕ້ອງມີມາດຕະຖານລະດັບຄວາມຮ້ອນບໍ່ເກີນຄ່າ ສະເລ່ຍອຸນຫະພູມ 34 ອົງສາເຊ;

2. ວຽກທີ່ຜູ້ອອກແຮງງານເຮັດໃນລັກສະນະວຽກປານກາງ ຕ້ອງມີມາດຕະຖານລະດັບຄວາມຮ້ອນບໍ່ເກີນຄ່າສະເລ່ຍອຸນຫະພູມ 32 ອົງສາເຊ;

3. ວຽກທີ່ຜູ້ອອກແຮງງານເຮັດໃນລັກສະນະວຽກໜັກ ຕ້ອງມີມາດຕະຖານລະດັບຄວາມຮ້ອນບໍ່ເກີນຄ່າສະເລ່ຍອຸນຫະພູມ 30 ອົງສາເຊ.

### ມາດຕາ 6 ການວັດແທກຄວາມຮ້ອນ

ການວັດແທກຄວາມຮ້ອນ ມີ ສອງ ວິທີຄື:

1. ການວັດແທກອຸນຫະພູມແບບສະເລ່ຍ ແມ່ນການວັດແທກອຸນຫະພູມໃນພື້ນທີ່ ທີ່ມີຄວາມຮ້ອນບໍ່ສະໝ່ຳສະເໝີ ຫຼື ຜູ້ອອກແຮງງານເຮັດວຽກຫຼາຍຈຸດ ໃຫ້ວັດແທກອຸນຫະພູມໃນແຕ່ລະຊ່ວງເວລາຂອງການເຮັດວຽກ ທີ່ມີອຸນຫະພູມປ່ຽນແປງ ແລ້ວຊອກຫາຄ່າສະເລ່ຍ;
2. ການວັດແທກອຸນຫະພູມ ແບບສະເພາະຈຸດ ແມ່ນການວັດແທກອຸນຫະພູມໃນພື້ນທີ່ ທີ່ມີຄວາມຮ້ອນສະໝ່ຳສະເໝີທີ່ບໍລິເວນເຮັດວຽກ ໃຫ້ແທກອຸນຫະພູມໃນຈຸດດຽວ.

ການຕິດຕັ້ງເຄື່ອງວັດແທກອຸນຫະພູມໃນສະຖານທີ່ເຮັດວຽກ ຕ້ອງຢູ່ໃນລະດັບໜ້າເອິກ ຂອງພະນັກງານຜູ້ເຮັດວຽກໃນຈຸດດັ່ງກ່າວ ໂດຍວັດແທກຊ່ວງເວລາທີ່ມີຄວາມຮ້ອນສູງຂອງການເຮັດວຽກເປັນໄລຍະເວລາ ສອງຊົ່ວໂມງ.

ທຸກຫົວໜ່ວຍແຮງງານຕ້ອງໄດ້ຮັບການວັດແທກລະດັບຄວາມຮ້ອນຢ່າງນ້ອຍປີລະໜຶ່ງຄັ້ງ ຢູ່ບໍລິເວນທີ່ມີຜູ້ອອກແຮງງານປະຕິບັດວຽກງານໃນສະພາບປົກກະຕິ ແລະ ຕ້ອງວັດແທກໃນເດືອນທີ່ມີອາກາດຮ້ອນທີ່ສຸດຂອງການເຮັດວຽກໃນປີນັ້ນ.

### ມາດຕາ 7 ການຄວບຄຸມຄວາມຮ້ອນ ໃນສະຖານທີ່ເຮັດວຽກ

ການຄວບຄຸມຄວາມຮ້ອນໃນສະຖານທີ່ເຮັດວຽກ ແມ່ນການນຳໃຊ້ເຕັກນິກ ແລະ ເຄື່ອງມືອຸປະກອນຢ່າງເໝາະສົມ ໃນການຄວບຄຸມ ຫຼື ຫຼຸດຜ່ອນອຸນຫະພູມ ເປັນຕົ້ນການຫຸ້ມສະນວນ, ໃຊ້ສາກກັ້ນ, ຕິດຕັ້ງລະບົບລະບາຍອາກາດ, ແຍກແຫຼ່ງກຳເນີດຄວາມຮ້ອນຈາກບໍລິເວນເຮັດວຽກອື່ນ, ໃສ່ອຸປະກອນປ້ອງກັນແຮງງານ ຫຼື ການຫຼຸດເວລາເຮັດວຽກທີ່ສຳຜັດກັບຄວາມຮ້ອນ.

ຜູ້ໃຊ້ແຮງງານ ຕ້ອງຄວບຄຸມອຸນຫະພູມ, ດຳເນີນການປັບປຸງ ແລະ ແກ້ໄຂທາງດ້ານວິສາວະກຳໃນສະຖານທີ່ເຮັດວຽກໃຫ້ລະດັບຄວາມຮ້ອນບໍ່ເກີນມາດຕະຖານ ຕາມທີ່ກຳນົດໄວ້ໃນມາດຕາ 5 ຂໍ້ຕົກລົງສະບັບນີ້, ຖ້າຫາກການປັບປຸງ ແລະ ແກ້ໄຂ ຍັງບໍ່ໄດ້ຕາມມາດຕະຖານທີ່ກຳນົດໄວ້ ຜູ້ໃຊ້ແຮງງານຕ້ອງປະກາດເຕືອນໃຫ້ຜູ້ອອກແຮງງານຊາບກ່ຽວກັບ ໃນບໍລິເວນນັ້ນອາດຈະເປັນອັນຕະລາຍຕໍ່ສຸຂະພາບ ຂອງຜູ້ອອກແຮງງານ ແລະ ຕ້ອງສະໜອງອຸປະກອນປ້ອງກັນສ່ວນບຸກຄົນທີ່ເໝາະສົມ ໃຫ້ຜູ້ອອກແຮງງານສວມໃສ່ຕະຫຼອດເວລາເຮັດວຽກ.

## ໝວດທີ 3
## ມາດຕະຖານ ແສງສະຫວ່າງ

### ມາດຕາ 8 ມາດຕະຖານແສງສະຫວ່າງ

ມາດຕະຖານແສງສະຫວ່າງ ສຳລັບ ສະຖານທີ່ເຮັດວຽກງານ ມີ 3 ປະເພດຄື:

1. ມາດຕະຖານ ຂອງແສງສະຫວ່າງ ບໍລິເວນພື້ນທີ່ທົ່ວໄປ
2. ມາດຕະຖານຂອງແສງສະຫວ່າງ ບໍລິເວນພື້ນທີ່ການຜະລິດ
3. ມາດຕະຖານສະຫວ່າງທີ່ໃຫ້ຜູ້ອອກແຮງງານຄົນໃດຄົນໜຶ່ງເຮັດວຽກ

ເຊິ່ງມີຄ່າມາດຕະຖານຕາມຂົງເຂດ, ພື້ນທີ່ທົ່ວໄປ, ພື້ນທີ່ການຜະລິດ ແລະ ບ່ອນທີ່ໃຫ້ຜູ້ອອກແຮງງານເຮັດ ກຳນົດໄວ້ຂັດຕິດມາ.

## ມາດຕາ 9 ການວັດແທກແສງສະຫວ່າງ

ການວັດແທກແສງສະຫວ່າງ ມີ ສອງ ຮູບແບບຄື:

1. ການວັດແທກແສງສະຫວ່າງ ແບບສະເລ່ຍ ແມ່ນການວັດແທກແສງສະຫວ່າງໃນຫຼາຍຈຸດ ໂດຍແບ່ງພື້ນທີ່ ອອກເປັນຂະໜາດ 2x2 ແມັດ, ຖືເຄື່ອງວັດແທກໃນແນວຂະໜານກັບພື້ນ ໂດຍໃຫ້ສູງຈາກພື້ນ 75 ຊັງຕີແມັດ ແລ້ວນຳຄ່າວັດແທກໄດ້ຮັບແຕ່ລະສ່ວນມາບວກແລ້ວຫານເອົາຄ່າສະເລ່ຍ. ໃນກໍລະນີພື້ນທີ່ວັດແທກໄດ້ຕິດຕັ້ງດອກໄຟແບບດຽວກັນ ທີ່ມີໄລຍະຫ່າງສະໝໍ່າສະເໝີທົ່ວບໍລິເວນ ສາມາດວັດແທກຈຸດໃດຈຸດໜຶ່ງ ແລ້ວໃຊ້ເປັນຄ່າຕົວແທນຂອງພື້ນທີ່ນັ້ນໄດ້. ການວັດແທກແສງສະຫວ່າງແບບສະເລ່ຍ ໃຊ້ສຳລັບການວັດແທກຄວາມສະຫວ່າງໃນພື້ນທີ່ທົ່ວໄປ ຫຼື ຫ້ອງ;
2. ການວັດແທກແສງສະຫວ່າງ ແບບສະເພາະຈຸດເຮັດວຽກ ແມ່ນການວັດແທກແສງສະຫວ່າງຢູ່ບໍລິເວນທີ່ຜູ້ອອກແຮງງານໃຊ້ສາຍຕາເບິ່ງວັດຖຸໃດໜຶ່ງໃນການເຮັດວຽກ, ເຊິ່ງການວັດແທກຕ້ອງວາງເຄື່ອງວັດແທກຕາມລວງດຽວກັບວັດຖຸທີ່ຜູ້ອອກແຮງງານແນມເບິ່ງ. ການວັດແທກແສງສະຫວ່າງສະເພາະຈຸດເຮັດວຽກ ໃຊ້ສຳລັບການວັດແທກໃນພື້ນທີ່ການຜະລິດ

ທຸກຫົວໜ່ວຍແຮງງານ ຕ້ອງວັດແທກລະດັບຄວາມເຂັ້ມຂອງແສງສະຫວ່າງຢ່າງໜ້ອຍ ບໍ່ໃຫ້ຫຼຸດໜຶ່ງຄັ້ງຕໍ່ປີ ໃນສະຖານທີ່ເຮັດວຽກທຸກປະເພດກິດຈະການ ໂດຍໃຫ້ວັດແທກບໍລິເວນພື້ນທີ່ທົ່ວໄປ, ບໍລິເວນພື້ນທີ່ໃຊ້ປະໂຫຍດໃນຂະບວນການຜະລິດທີ່ຜູ້ອອກແຮງງານເຮັດວຽກ ແລະ ບໍລິເວນທີ່ຜູ້ອອກແຮງງານເຮັດວຽກ ໂດຍໃຊ້ສາຍຕາເບິ່ງສະເພາະຈຸດ ຫຼື ຕ້ອງໃຊ້ສາຍຕາຢູ່ກັບທີ່ໃນການເຮັດວຽກໃນສະພາບການເຮັດວຽກປົກກະຕິ ແລະ ໃນຊ່ວງເວລາທີ່ມີແສງສະຫວ່າງຕາມທຳມະຊາດທີ່ໜ້ອຍທີ່ສຸດ.

## ມາດຕາ 10 ການຄວບຄຸມແສງສະຫວ່າງ

ການຄວບຄຸມລະດັບແສງສະຫວ່າງໃນພື້ນທີ່ທົ່ວໄປ ແລະ ພື້ນທີ່ການຜະລິດຂອງໂຮງງານ ແມ່ນການຕິດຕັ້ງດອກໄຟ ຫຼື ການອອກແບບອາຄານໃຫ້ມີແສງສະຫວ່າງຈາກທຳມະຊາດສ່ອງເຂົ້າຢ່າງພຽງພໍ ເພື່ອໃຫ້ເບິ່ງເຫັນສິ່ງກີດຂວາງ ແລະ ອັນຕະລາຍທີ່ອາດຈະເກີດຈາກການເຄື່ອນໄຫວຂອງເຄື່ອງຈັກ ຫຼື ໄຟຟ້າຢ່າງຊັດເຈນຕາມຄ່າມາດຕະຖານທີ່ໄດ້ກຳນົດໄວ້ຂອງຂໍ້ຕົກລົງສະບັບນີ້, ການຕິດຕັ້ງດອກໄຟຕ້ອງບໍ່ໃຫ້ແສງສ່ອງໂດຍກົງ ຫຼື ສະທ້ອນເຂົ້າຕາຜູ້ອອກແຮງງານ.

ຜູ້ໃຊ້ແຮງງານ ຕ້ອງໃຊ້ ຫຼື ຈັດໃຫ້ມີແຜ່ນບັງແສງ, ແຜ່ນຟິມກອງແສງ ຫຼື ມາດຕະການອື່ນທີ່ເໝາະສົມ ແລະ ພຽງພໍເພື່ອປ້ອງກັນບໍ່ໃຫ້ແສງຕົງ ຫຼື ແສງສະທ້ອນຈາກແຫຼ່ງກຳເນີດແສງ ຫຼື ທີ່ມີແສງສ່ອງເຂົ້າຕາຜູ້ອອກແຮງງານໂດຍກົງໃນຂະນະເຮັດວຽກ, ໃນກໍລະນີບໍ່ອາດສາມາດປ້ອງກັນໄດ້ ຕ້ອງຈັດໃຫ້ຜູ້ອອກ ແຮງງານສວມໃສ່ອຸປະກອນປ້ອງກັນຄວາມປອດໄພສ່ວນບຸກຄົນຕະຫຼອດເວລາທີ່ເຮັດວຽກ.

ໃນກໍລະນີທີ່ຜູ້ອອກແຮງງານຕ້ອງເຮັດວຽກໃນສະຖານທີ່ມືດ, ຄັບແຄບ ເຊັ່ນ: ໃນຖໍ້າ, ອຸໂມງ ຫຼື ໃນທີ່ມີລັກສະນະທີ່ກ່າວມານັ້ນ ຜູ້ໃຊ້ແຮງງານຕ້ອງຈັດໃຫ້ຜູ້ອອກແຮງງານສວມໝວກກັນກະທົບທີ່ມີອຸປະກອນສ່ອງແສງສະຫວ່າງ ຫຼື ມີອຸປະກອນສ່ອງແສງສະຫວ່າງອື່ນທີ່ເໝາະສົມແກ່ສະພາບ ແລະ ລັກສະນະຂອງງານຕະຫຼອດເວລາທີ່ເຮັດວຽກ.

## ໝວດທີ 4

## ມາດຕະຖານສຽງ

### ມາດຕາ 11 ມາດຕະຖານຂອງສຽງ

ຜູ້ໃຊ້ແຮງງານຕ້ອງຄວບຄຸມລະດັບສຽງທີ່ຜູ້ອອກແຮງງານໄດ້ຮັບສະເລ່ຍຕະຫຼອດເວລາການເຮັດວຽກໃນແຕ່ລະວັນ ບໍ່ໃຫ້ເກີນ ຕາມຄ່າມາດຕະຖານທີ່ໄດ້ກໍານົດໄວ້ລຸ່ມນີ້:

| ລ/ດ | ຄ່າມາດຕະຖານບໍ່ໃຫ້ເກີນ | ຫົວໜ່ວຍ (ເດຊີເບລ) | ໄລຍະເວລາເຮັດວຽກ |
|---|---|---|---|
| 1. | 80 | dB(A) | 24 ຊົ່ວໂມງ |
| 2. | 85 | dB(A) | 8 ຊົ່ວໂມງ |
| 3. | 88 | dB(A) | 4 ຊົ່ວໂມງ |
| 4. | 91 | dB(A) | 2 ຊົ່ວໂມງ |
| 5. | 94 | dB(A) | 1 ຊົ່ວໂມງ |
| 6. | 97 | dB(A) | 30 ນາທີ |
| 7. | 100 | dB(A) | 15 ນາທີ |
| 8. | 103 | dB(A) | 7,5 ນາທີ |
| 9. | 106 | dB(A) | 4 ນາທີ |

### ມາດຕາ 12 ການວັດແທກລະດັບສຽງ

ທຸກຫົວໜ່ວຍແຮງງານຕ້ອງໄດ້ຮັບການວັດແທກລະດັບສຽງຢ່າງໜ້ອຍປີລະໜຶ່ງຄັ້ງໃນສະຖານທີ່ເຮັດວຽກ, ວິທີການວັດແທກລະດັບສຽງ ໃຫ້ວັດແທກບໍລິເວນທີ່ມີຜູ້ອອກແຮງງານເຮັດວຽກຢູ່ໃນສະພາບການເຮັດວຽກປົກກະຕິ ໂດຍຕັ້ງຄ່າເຄື່ອງວັດແທກສຽງທີ່ເອ (Scale A) ການຕອບສະໜອງແບບຊ້າ (Slow) ແລະວັດແທກທີ່ລະດັບຫູຂອງຜູ້ອອກແຮງງານທີ່ກໍາລັງປະຕິບັດວຽກງານ ຈຸດນັ້ນລັດສະໝີບໍ່ໃຫ້ເກີນ 30 ຊັງຕີແມັດ, ກໍລະນີໃຊ້ເຄື່ອງວັດແທກປະລິມານສຽງສະສົມ ຕ້ອງຕັ້ງຄ່າໃຫ້ເຄື່ອງຄໍານວນປະລິມານສຽງສະສົມທີ່ລະດັບ 80 ເດຊີເບລ Criteria Level ທີ່ລະດັບ 90 ເດຊີເບລ Energy Exchange rate ທີ່ຫ້າສ່ວນການໃຊ້ເຄື່ອງວັດແທກສຽງກະທົບ ຫຼື ສຽງກະແທກໃຫ້ຕັ້ງຄ່າຕາມທີ່ລະບຸໃນຄູ່ມືການໃຊ້ງານຂອງຜູ້ຜະລິດ.

### ມາດຕາ 13 ມາດຕະການຄວບຄຸມດ້ານສຽງ

ການຄວບຄຸມສຽງດັງ ແມ່ນການນໍາໃຊ້ເຕັກນິກ ແລະ ເຄື່ອງມືອຸປະກອນຢ່າງເໝາະສົມ ໃນການຄວບຄຸມ ຫຼື ຫຼຸດຜ່ອນສຽງດັງ ເປັນຕົ້ນການກໍ່ກໍາແພງກັນ, ໃຊ້ສະນວນກັນສຽງ ແລະ ອຸປະກອນອັດຫູທີ່ໄດ້ມາດຕະຖານ.

ໃນບໍລິເວນສະຖານທີ່ເຮັດວຽກທີ່ມີລະດັບສຽງກະທົບ ຫຼື ສຽງກະແທກເກີນ 140 ເດຊີເບລເອ ຫຼື ມີປະລິມານສຽງສະສົມຂອງສຽງກະທົບເກີນມາດຕະຖານທີ່ກຳນົດໄວ້ ຜູ້ໃຊ້ແຮງງານຕ້ອງໃຫ້ຜູ້ອອກແຮງງານຢຸດເຮັດວຽກຈົນກວ່າຈະໄດ້ປັບປຸງ ຫຼື ແກ້ໄຂລະດັບສຽງ, ໃນກໍລະນີບໍ່ສາມາດປັບປຸງ ຫຼື ແກ້ໄຂໄດ້ ຜູ້ໃຊ້ແຮງງານຕ້ອງໃຫ້ຜູ້ອອກແຮງງານສວມໃສ່ອຸປະກອນປ້ອງກັນສຽງຕະຫຼອດເວລາທີ່ເຮັດວຽກ ເພື່ອຫຼຸດສຽງໃຫ້ຢູ່ໃນລະດັບທີ່ບໍ່ເກີນມາດຕະຖານທີ່ກຳນົດໄວ້.

ໃນບໍລິເວນທີ່ມີລະດັບສຽງດັງເກີນມາດຕະຖານທີ່ກຳນົດໄວ້ ຜູ້ໃຊ້ແຮງງານຕ້ອງຈັດໃຫ້ມີເຄື່ອງໝາຍເຕືອນ ທີ່ເຫັນຊັດເຈນ ເພື່ອໃຫ້ຜູ້ອອກແຮງງານນຳໃຊ້ອຸປະກອນປ້ອງກັນສຽງ.

## ໝວດທີ 5
## ການຈັດຕັ້ງປະຕິບັດ

### ມາດຕາ 14. ຄວາມຮັບຜິດຊອບຂອງກົມຄຸ້ມຄອງແຮງງານ

1. ຄົ້ນຄວ້າສ້າງ ແລະ ປັບປຸງ ນິຕິກຳກ່ຽວກັບຂອງກັບມາດຕະຖານຄວາມຮ້ອນ, ແສງສະຫວ່າງ ແລະ ສຽງ ໃນສະຖານທີ່ເຮັດວຽກ ກ່ຽວຂ້ອງກັບຄວາມປອດໄພ ແລະ ສຸຂະພາບແຮງງານ;
2. ເຜີຍແຜ່, ແນະນຳ ນິຕິກຳກ່ຽວຂ້ອງກັບ ມາດຕະຖານຄວາມຮ້ອນ, ແສງສະຫວ່າງ ແລະ ສຽງໃນສະຖານທີ່ເຮັດວຽກ;
3. ຄຸ້ມຄອງ, ຕິດຕາມ ແລະ ກວດກາມາດຕະຖານຄວາມຮ້ອນ, ແສງສະຫວ່າງ ແລະ ສຽງ ໃນສະຖານທີ່ເຮັດວຽກ;
4. ພົວພັນ ແລະ ປະສານສົມທົບກັບກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງໃນການຈັດຕັ້ງ ມາດຕະຖານຄວາມຮ້ອນ, ແສງສະຫວ່າງ ແລະ ສຽງ ໃນສະຖານທີ່ເຮັດວຽກ;
5. ປະຕິບັດນະໂຍບາຍຕໍ່ຜູ້ມີຜົນງານ ແລະ ນຳໃຊ້ມາດຕະການຕໍ່ຜູ້ລະເມີດມາດຕະຖານຄວາມຮ້ອນ, ແສງສະຫວ່າງ ແລະ ສຽງ ໃນສະຖານທີ່ເຮັດວຽກ;
6. ປະຕິບັດຄວາມຮັບຜິດຊອບອື່ນຕາມກົດໝາຍ ແລະ ລະບຽບການກຳນົດ.

### ມາດຕາ 15 ຄວາມຮັບຜິດຊອບຂອງພະແນກແຮງງານ ແລະ ສະຫວັດດີການສັງຄົມ

1. ເຜີຍແຜ່, ແນະນຳ ນິຕິກຳກ່ຽວຂ້ອງກັບ ມາດຕະຖານຄວາມຮ້ອນ, ແສງສະຫວ່າງ ແລະ ສຽງໃນສະຖານທີ່ເຮັດວຽກ;
2. ຕິດຕາມ ແລະ ກວດກາມາດຕະຖານຄວາມຮ້ອນ, ແສງສະຫວ່າງ ແລະ ສຽງ ໃນສະຖານທີ່ເຮັດວຽກກ່ຽວຂ້ອງກັບຄວາມປອດໄພ ແລະ ສຸຂະພາບແຮງງານ;
3. ພົວພັນ ແລະ ປະສານສົມທົບກັບພະແນກການ ແລະ ອົງການອື່ນທີ່ກ່ຽວຂ້ອງໃນການຈັດຕັ້ງ ມາດຕະຖານຄວາມຮ້ອນ, ແສງສະຫວ່າງ ແລະ ສຽງ ໃນສະຖານທີ່ເຮັດວຽກ;
4. ປະຕິບັດນະໂຍບາຍຕໍ່ຜູ້ມີຜົນງານ ແລະ ນຳໃຊ້ມາດຕະການຕໍ່ຜູ້ລະເມີດມາດຕະຖານຄວາມຮ້ອນ, ແສງສະຫວ່າງ ແລະ ສຽງ ໃນສະຖານທີ່ເຮັດວຽກ;
5. ປະຕິບັດຄວາມຮັບຜິດຊອບອື່ນຕາມກົດໝາຍ ແລະ ລະບຽບການກຳນົດ.

ມາດຕາ 16 ຄວາມຮັບຜິດຊອບຂອງຫົວໜ່ວຍແຮງງານ

1. ເຄົາລົບ ແລະ ປະຕິບັດກົດໝາຍ ແລະ ລະບຽບການກ່ຽວຂ້ອງຢ່າງເຂັ້ມງວດ;
2. ຝຶກອົບຮົມຄວາມຮູ້ດ້ານຄວາມປອດໄພ ກ່ຽວກັບສຽງດັງ, ແສງສະຫວ່າງ ແລະ ອຸນຫະພູມໃຫ້ຜູ້ອອກແຮງງານເປັນປົກກະຕິ;
3. ສະໜອງຂໍ້ມູນດ້ານຄວາມປອດໄພ ກ່ຽວກັບຄວາມຮ້ອນ, ແສງສະຫວ່າງ ແລະ ສຽງໃຫ້ຜູ້ອອກແຮງງານ;
4. ຕິດຕາມກວດກາ ແລະ ວັດແທກຄວາມຮ້ອນ, ແສງສະຫວ່າງ ແລະ ສຽງຢ່າງໜ້ອຍ ໜຶ່ງຄັ້ງຕໍ່ປີ;
5. ກຳນົດ ແລະ ຈັດຕັ້ງປະຕິບັດມາດຕະການຫຼຸດຜ່ອນຄວາມຮ້ອນ, ແສງສະຫວ່າງ ແລະ ສຽງ
6. ປະກອບອຸປະກອນປ້ອງກັນສ່ວນບຸກຄົນ ໃຫ້ຜູ້ອອກແຮງງານ ຢ່າງເໝາະສົມ ແລະ ພຽງພໍ ໃນເວລາເຮັດວຽກເກີນມາດຕະຖານຄວາມຮ້ອນ, ແສງສະຫວ່າງ ແລະ ສຽງ ຕາມລັກສະນະຂອງໜ້າວຽກ;
7. ປະຕິບັດຄວາມຮັບຜິດຊອບອື່ນຕາມທີ່ໄດ້ກຳນົດໃນກົດໝາຍ ແລະ ລະບຽບການ.

ມາດຕາ 17 ຄວາມຮັບຜິດຊອບຂອງຜູ້ອອກແຮງງານ

1. ປະຕິບັດຕາມກົດລະບຽບກ່ຽວກັບຄວາມປອດໄພ ແລະ ສຸຂະພາບແຮງງານຢ່າງເຂັ້ມງວດ;
2. ຕ້ອງສວມໃສ່ອຸປະກອນປ້ອງກັນຄວາມປອດໄພສ່ວນບຸກຄົນທີ່ຜູ້ໃຊ້ແຮງງານສະໜອງໃຫ້ພ້ອມທັງຮັບຜິດຊອບ ໃນການຮັກສາ, ສ້ອມແປງຕາມຄວາມສາມາດຕົວຈິງ;
3. ປະຕິເສດການເຮັດວຽກບ່ອນທີ່ມີຄ່າເກີນມາດຕະຖານທີ່ກໍ່ໃຫ້ເກີດຄວາມສ່ຽງ ແລະ ເປັນອັນຕະລາຍຮ້າຍແຮງຕໍ່ຊີວິດ ຫຼື ສຸຂະພາບຂອງຕົນ;
4. ສະເໜີ ແລະ ລາຍງານ ໃຫ້ຜູ້ໃຊ້ແຮງງານ ໃນການປັບປຸງສະຖານທີ່ເຮັດວຽກໃຫ້ມີຄວາມປອດໄພ ແລະ ສຸຂະພາບແຮງງານ.
5. ປະຕິບັດຄວາມຮັບຜິດຊອບອື່ນຕາມ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ໝວດທີ 6
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

ມາດຕາ 18 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ເອົາໃຈໃສ່ໃນການປະຕິບັດຖືກຕ້ອງ ແລະ ຄົບຖ້ວນຕາມຄ່າມາດຕະຖານໃນຂໍ້ຕົກລົງສະບັບນີ້ວ່າງອອກ ແລະ ຖືກຕ້ອງຕາມລະບຽບກົດໝາຍທີ່ກ່ຽວຂ້ອງ ຈະໄດ້ຮັບການຍ້ອງຍໍ ແລະ ໄດ້ຮັບເປັນຫົວໜ່ວຍມາດຕະຖານດ້ານແຮງງານ.

ມາດຕາ 19 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຫາກບໍ່ປະຕິບັດຕາມຂໍ້ຕົກລົງວ່າດ້ວຍ ການກຳນົດມາດຕະຖານຄວາມປອດໄພ ແລະ ສຸຂະພາບແຮງງານ ກ່ຽວກັບຄວາມຮ້ອນ, ແສງສະຫວ່າງ ແລະ ສຽງ ໃນສະຖານທີ່ເຮັດວຽກ ສະບັບນີ້ ຈະຖືກສຶກສາອົບຮົມ, ປັບໄໝຕາມດຳລັດວ່າດ້ວຍຄວາມປອດໄພ ແລະ ສຸຂະພາບແຮງງານ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 20 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມຄຸ້ມຄອງແຮງງານ, ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ, ນະຄອນຫຼວງວຽງຈັນ, ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມເມືອງ, ນະຄອນ, ຫົວໜ່ວຍການຜະລິດ, ທຸລະກິດ, ການບໍລິການ ແລະ ພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 21 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ລັດຖະມົນຕີ**

ໄພໄຊ ໄຊຍະສອນ

## ມາດຕະຖານແສງສະຫວ່າງໃນສະຖານທີ່ເຮັດວຽກ

### 1. ມາດຕະຖານແສງສະຫວ່າງ ສໍາລັບບໍລິເວນພື້ນທີ່ທົ່ວໄປ

ຜູ້ໃຊ້ແຮງງານ ຮັບປະກັນຄ່າມາດຕະຖານແສງສະຫວ່າງ ສໍາລັບພື້ນທີ່ທົ່ວໄປຂອງສະຖານທີ່ເຮັດວຽກ ຕ້ອງບໍ່ຫຼຸດຄ່າມາດຕະຖານ ຕາມທີ່ໄດ້ກໍານົດໄວ້ໃນຕາຕະລາງລຸ່ມນີ້:

| ລ/ດ | ປະເພດອຸດສາຫະກໍາ | ອາຄານ/ພື້ນທີ່ | ມາດຕະຖານ (ລັກສ) |
|---|---|---|---|
| 1. | ບໍລິເວນພື້ນທີ່ທົ່ວໄປຂອງອາຄານ | ທາງເຂົ້າ | |
| | | - ທາງເຂົ້າຫ້ອງໂຖງ ຫຼື ຫ້ອງພັກລໍ | 200 |
| | | - ບໍລິເວນໂຕະປະຊາສໍາພັນ ຫຼື ໂຕະຕິດຕໍ່ລູກຄ້າ | 400 |
| | | - ປະຕູທາງເຂົ້າໃຫຍ່ຂອງສະຖານທີ່ເຮັດວຽກ | 50 |
| | | - ປ້ອມຍາມ | 100 |
| | | - ຈຸດຂົນຖ່າຍສິນຄ້າ | 100 |
| | | ພື້ນທີ່ສັນຈອນ | |
| | | - ທາງຍ່າງໃນພື້ນທີ່ສັນຈອນເບົາບາງ | 20 |
| | | - ທາງຍ່າງໃນພື້ນທີ່ສັນຈອນໜາແໜ້ນ | 50 |
| | | - ຂັ້ນໄດ | 50 |
| | | ຫ້ອງຝຶກອົບຮົມ ແລະ ຫ້ອງບັນຍາຍ | |
| | | - ພື້ນທີ່ທົ່ວໄປ | 300 |
| | | ອາຄານສະຖານີຂົນສົ່ງ ( ເດີນບິນ, ສະຖານີລົດເມ ແລະ ລົດໄຟ) | |
| | | - ຫ້ອງຈອງປີ້ ແລະ ຂາຍປີ້ | 400 |
| | | ຫ້ອງຄອມພິວເຕີ | |
| | | - ບໍລິເວນທົ່ວໄປ | 400 |
| | | ຫ້ອງປະຊຸມ | 300 |
| | | ວຽກທຸລະການ | |
| | | - ຫ້ອງຖ່າຍເອກະສານ | 300 |
| | | - ຫ້ອງນິລະໄພ | 100 |
| | | ຮ້ານອາຫານ | |
| | | - ພື້ນທີ່ທົ່ວໄປ | 200 |
| | | - ບໍລິເວນໂຕະເກັບເງິນ | 300 |
| | | ໂຮງຊັກລີດ | |

| | | | |
|---|---|---|---|
| | | - ບໍລິເວນຫ້ອງອົບ ຫຼື ຫ້ອງເຮັດໃຫ້ແຫ້ງ<br>ຫ້ອງຄົວກິນ<br>- ພື້ນທີ່ທົ່ວໄປ<br>- ບໍລິເວນບ່ອນປຸງອາຫານ ແລະ ບ່ອນທຳຄວາມສະອາດ<br>ຫ້ອງພັກພະນັກງານ<br>- ຫ້ອງປ່ຽນເສື້ອຜ້າ ແລະ ບໍລິເວນຕູ້ເກັບເຄື່ອງຂອງ<br>- ຫ້ອງພັກຜ່ອນ<br>ຫ້ອງປະຖົມພະຍາບານ<br>- ຫ້ອງພັກຟື້ນ<br>- ຫ້ອງກວດຮັກສາ<br>ຫ້ອງສຸຂາ<br>ຫ້ອງເກັບເຄື່ອງຂອງ<br>- ຫ້ອງເກັບວັດຖຸດິບຂະໜາດໃຫຍ່ເກັບລວມໄວ້ໂດຍບໍ່ໄດ້ເຄື່ອນຍ້າຍ<br>- ຫ້ອງເກັບວັດຖຸດິບຂະໜາດໃຫຍ່ເພື່ອການເຄື່ອນຍ້າຍ<br>- ຫ້ອງເກັບວັດຖຸດິບຂະໜາດກາງ ຫຼື ລະອຽດອ່ອນເກັບລວມໄວ້ໂດຍບໍ່ໄດ້ເຄື່ອນຍ້າຍ<br>- ຫ້ອງເກັບວັດຖຸດິບຂະໜາດກາງເກັບລວມໄວ້ເພື່ອການເຄື່ອນຍ້າຍ | 100<br><br>200<br>300<br><br>100<br>50<br><br>50<br>400<br>100<br><br>50<br>100<br>100<br>200 |
| 2. | ອຸດສາຫະກຳ ແລະ ເຄື່ອງດື່ມ | ໂຮງງານນ້ຳຕານ<br>- ພື້ນທີ່ທົ່ວໄປ<br>ໂຮງນ້ຳກ້ອນ<br>- ພື້ນທີ່ທົ່ວໄປ | <br>200<br><br>200 |
| 3. | ອຸດສາຫະກຳ ອື່ນ | ໂຮງງານຜະລິດກະແສໄຟຟ້າ<br>- ພື້ນທີ່ທົ່ວໄປ<br>ອາຄານໝໍ້ນ້ຳ<br>- ພື້ນທີ່ທົ່ວໄປ<br>ຫ້ອງຄວບຄຸມ ແລະ ຫ້ອງສະວິດ<br>- ພື້ນທີ່ທົ່ວໄປ<br>ຫ້ອງປະຕິບັດການທົດລອງ ແລະ ຫ້ອງທົດສອບ<br>- ພື້ນທີ່ທົ່ວໄປ<br>ໂຮງສາຍຮູບເງົາ | <br>50<br><br>50<br><br>200<br><br>400<br> |

| | | | |
|---|---|---|---|
| | | - ຫ້ອງຈອງປີ້ ແລະ ຂາຍປີ້<br>- ຫ້ອງສາຍຮູບເງົາ | 400<br>200 |

2. ມາດຕະຖານແສງສະຫວ່າງ ສໍາລັບບໍລິເວນບໍລິເວນພື້ນທີ່ການຜະລິດ

ຜູ້ໃຊ້ແຮງງານ ຕ້ອງຮັບປະກັນຄ່າມາດຕະຖານແສງສະຫວ່າງ ສໍາລັບພື້ນທີ່ການຜະລິດຂອງສະຖານທີ່ເຮັດວຽກ ຕ້ອງບໍ່ຫຼຸດຄ່າມາດຕະຖານ ຕາມທີ່ໄດ້ກໍານົດໄວ້ໃນຕາຕະລາງລຸ່ມນີ້:

| ລ/ດ | ປະເພດອຸດສາຫະກໍາ | ອາຄານ/ພື້ນທີ່ | ມາດຕະຖານ (ລັກສ) |
|---|---|---|---|
| 1. | ອຸດສາຫະກໍາອາຫານ ແລະ ເຄື່ອງດື່ມ | ໂຮງງານເຮັດເຂົ້ານົມປັງ<br>- ບໍລິເວນຂະບວນການຜະລິດທົ່ວໄປ<br>- ບໍລິເວນຫ້ອງປະສົມ ແລະ ຫ້ອງອົບເຂົ້ານົມປັງ | <br>200<br>300 |
| 2. | ອຸດສາຫະກໍາເຈັ້ຍ ແລະ ສິ່ງພິມ | ໂຮງງານຜະລິດເຈັ້ຍ ແລະ ເຈັ້ຍແຂງ<br>- ຫ້ອງເຄື່ອງຈັກ<br>- ຫ້ອງລີດເຈັ້ຍ<br>- ຫ້ອງກຽມວັດຖຸດິບ ແລະ ບໍລິເວນຂະບວນການຕັດຕົບແຕ່ງການເຮັດໃຫ້ລຽບ<br>ໂຮງພິມ<br>ຫ້ອງແທ່ນພິມ<br>- ບໍລິເວຂະບວນການຜະລິດທົ່ວໄປ<br>- ບໍລິເວນການກວດສອບ | <br>400<br>400<br>400<br><br><br><br>400<br>600 |
| 3. | ອຸດສາຫະກໍາຜະລິດ ຕະພັນໄມ້ | ວຽກໄມ້ວັດສະດຸແຜ່ນຕົບແຕ່ງຜິວ<br>- ບໍລິເວຂະບວນການຜະລິດທົ່ວໄປ | <br>200 |
| 4. | ອຸດສາຫະກໍາເຄມີ | ໂຮງງານຜະລິດຢາ ແລະ ສານເຄມີບໍລິສຸດ<br>- ບໍລິເວນບ່ອນເກັບວັດຖຸດິບ<br>- ບໍລິເວນຫ້ອງທົດສອບ ແລະ ຫ້ອງທົດລອງ<br>- ບໍລິເວນຂະບວນການຜະລິດສານເຄມີບໍລິສຸດ<br>ໂຮງງານຜະລິດສະບູ<br>- ບໍລິເວນຂະບວນການຕົ້ມ ຫຼື ການຕັດສະບູເປັນກ້ອນ<br>- ບໍລິເວນຫ້ອງທົດສອບ ແລະ ທົດລອງ<br>- ບໍລິເວນຫ້ອງກະກຽມການຜະລິດສານເຄມີ | <br>300<br>400<br>300<br><br>200<br>400<br>300 |

| | | | |
|---|---|---|---|
| 5. | ອຸດສາຫະກຳປລາສະ ຕິກ ແລະ ຢາງ | ໂຮງງານຜະລິດເຄື່ອງໜັງ<br>- ບໍລິເວນຂະບວນການຕົ້ມ<br>ໂຮງງານຜະລິດຢາງ<br>- ບໍລິເວນບ່ອນເກັບສິນຄ້າ ແລະ ບ່ອນກຽມໂຄງສ້າງ | <br>200<br><br>300 |
| 6. | ອຸດສາຫະກຳຜະລິດ ໂລຫະ | ໂຮງປະກອບເຄື່ອງບິນ ແລະ ສ້ອມແປງເຄື່ອງບິນ<br>- ບໍລິເວນຄັງເກັບຊິ້ນສ່ວນກຽມຜະລິດ<br>- ບໍລິເວນຂະບວນການສ້ອມແປງ ແລະ ບຳລຸງຮັກສາ<br>ໂຮງງານຜະລິດ ຫຼື ປະກອບໂມງ ແລະ ເຄື່ອງປະດັບ<br>- ບໍລິເວນຂະບວນການຜະລິດທົ່ວໄປ<br>- ບໍລິເວນຂະບວນການຜະລິດລະອຽດ<br>- ບໍລິເວນຂະບວນການຜະລິດລະອຽດສູງ | <br>600<br>400<br><br>600<br>800<br>2.400 |
| 7. | ອຸດສາຫະກຳເຫຼັກ | ໂຮງງານຜະລິດເຫຼັກ (ເຫຼັກເສັ້ນ, ເຫຼັກແຜ່ນ ແລະ ລວດ)<br>- ບໍລິເວນບໍ່ຊຸບ ແລະ ເຕົາອົບ<br>- ບໍລິເວນຂະບວນການນຳເຫຼັກເຂົ້າອົບ<br>- ບໍລິເວນຂະບວນການຮີດໜັກ, ຮີດຫຍາບ ຫຼື ການເສືອນຍາບ<br>- ບໍລິເວນການຮີດເຢັນ, ຮ້ອນ ແລະ ດຶງລວດດ້ວຍເຄື່ອງຈັກອັດ ໂຕມັດ ຫຼື ການເສືອນລະອຽດ<br>- ບໍລິເວນຂະບວນການຜະລິດທົ່ວໄປໃນແຜນຫຼອມ ແລະ ຮີດ<br>- ບໍລິເວນຂະບວນການເຮັດແຜ່ນເຫຼັກ, ການເຄືອບສັງກະສີ ແລະ ດີບຸກ<br>-ບໍລິເວນຫ້ອງມໍເຕີ<br>ໂຮງງານຜະລິດເຫຼັກກໍ່ສ້າງ<br>- ບໍລິເວນຂະບວນການຜະລິດທົ່ວໄປ | <br>100<br>200<br>200<br>300<br>100<br>200<br>600<br><br>200 |
| 8. | ອຸດສາຫະກຳເໝືອງ | ຂະບວນການເທິງພື້ນດິນ<br>- ບໍລິເວນຂະບວນການກຽມວັດຖຸດິບ<br>- ບໍລິເວນການເຮັດວຽກຂອງເຄື່ອງຈັກ, ເຄື່ອງເປົ່າ ຫຼື ພັດລົມ<br>- ບໍລິເວນຂະບວນການລ້າງແຮ່<br>- ຫ້ອງໜ່ວຍປະຕິບັດການສຸກເສີນ (Rescue room)<br>- ບໍລິເວນຂະບວນການສ້ອມແປງ<br>ຂະບວນການເຮັດວຽກໃນໃຕ້ດິນ<br>- ທາງ ເຂົ້າ-ອອກ | <br>200<br>200<br>100<br>200<br>200<br><br>20 |

| | | | |
|---|---|---|---|
| | | - ຫ້ອງເຄື່ອງຈັກ ໃຕ້ດິນ<br>- ບໍລິເວນສາຍພານລຳລຽງ<br>- ບໍລິເວນທາງແຍກ<br>- ສຳນັກງານໃຕ້ດິນ | 20<br>20<br>20<br>100 |
| 9. | ອຸດສາຫະກຳໂລຫະ | ໂຮງໂມ້ຫີນ<br>- ບໍລິເວນອຸໂມງ ແລະ ສາຍພານລຳລຽງ, ປ່ອງທາງຂຶ້ນລົງ, ຮາງເທຫີນ<br>- ບໍລິເວນຫ້ອງບົດຫີນ<br>- ບໍລິເວນຂະບວນການຄັດແຍກ<br>ໂຮງງານຜະລິດເຄື່ອງປັ້ນດິນເຜົາເຊຣາມິກ<br>- ບໍລິເວນຂະບວນການບົດ, ການຄັດແຍກ ແລະ ຫ້ອງເຜົາ<br>- ບໍລິເວນຂະບວນການປັ້ນຂຶ້ນຮູບ, ການອັດ, ການເຮັດຄວາມສະອາດ ແລະ ການແຕ່ງ<br>ໂຮງຫຼໍ່ໂດຍໃຊ້ແມ່ພິມຊາຍ<br>- ບໍລິເວນຂະບວນການກຽມຊາຍ ແລະ ການເຮັດຄວາມສະອາດ<br>ໂຮງງານແກ້ວ<br>- ບໍລິເວນຫ້ອງປະສົມ ແລະ ເຕົາເຜົາ | <br>200<br><br>200<br>200<br><br>200<br>300<br><br><br>200<br><br>200 |
| 10. | ອຸດສາຫະກຳ ອື່ນ | ໂຮງງານຜະລິດກະແສໄຟຟ້າ<br>- ບໍລິເວນທີ່ຕັ້ງໝໍ້ນ້ຳ ແລະ ເຄື່ອງສູບນ້ຳ<br>- ບໍລິເວນພື້ນທີ່ຮອບໆ ຫໍເຜົາ ແລະ ເຄື່ອງເປົ່າຂະເຫມົ່າ<br>- ບໍລິເວນຂະບວນການ ອື່ນ<br>- ບໍລິເວນອາຄານໝໍ້ນ້ຳມາດຕະຖານອາຄານໝໍ້ນ້ຳ<br>- ບໍລິເວນຫ້ອງຄວບຄຸມໃຊ້ມາດຕະຖານຫ້ອງຄວບຄຸມ ແລະ ຫ້ອງສະວິດ<br>ອາຄານໝໍ້ນ້ຳ<br>- ບໍລິເວນການຂົນຖ່າຍຖ່ານຫີນ<br>- ບໍລິເວນພື້ນທີ່ໜ້າໝໍ້ນ້ຳ<br>ສະຖານີບໍລິການນ້ຳມັນ<br>- ບໍລິເວນຫົວຈ່າຍນ້ຳມັນ<br>- ບໍລິເວນບໍລິການທົ່ວໄປ<br>ສະຖານີດັບເພີງ | <br>200<br>200<br>200<br><br><br><br>50<br>200<br><br>200<br>200<br> |

| | | | |
|---|---|---|---|
| | | - ຫ້ອງອຸປະກອນ, ເຄື່ອງມື ແລະ ເຄື່ອງໃຊ້ | 200 |
| | | ຫ້ອງຄວບຄຸມ ແລະ ສະວິດ | |
| | | - ບໍລິເວນແຜງຄວບຄຸມ ແລະ ແຜງສະວິດ | 400 |
| | | - ບໍລິເວນດ້ານຫຼັງແຜງຄວບຄຸມ ແລະ ແຜງສະວິດ | 200 |
| | | ຫ້ອງບັນຈຸຫີບຫໍ່ | |
| | | - ບໍລິເວນການບັນຈຸ ຫີບຫໍ່ ເຮັດເຄື່ອງໝາຍ ແລະ ຈັດສິ່ງ | 200 |
| | | - ບໍລິເວນໂຕະ ກວດນັບ | 200 |

3. ມາດຕະຖານແສງສະຫວ່າງ ທີ່ໃຫ້ຜູ້ອອກແຮງງານຄືນໃດຄືນໜຶ່ງເຮັດວຽກ

ມາດຕະຖານແສງສະຫວ່າງ ທີ່ໃຫ້ຜູ້ອອກແຮງງານຄືນໃດຄືນໜຶ່ງເຮັດວຽກ ຕ້ອງບໍ່ຫຼຸດຄ່າມາດຕະຖານ ຕາມທີ່ໄດ້ກຳນົດໄວ້ໃນຕາຕະລາງລຸ່ມນີ້:

| ລ/ດ | ປະເພດອຸດສາຫະກຳ | ອາຄານ/ພື້ນທີ່ | ຄ່າມາດຕະຖານ (ລັກສ) |
|---|---|---|---|
| 1. | ອຸດສາຫະກຳອາຫານ ແລະ ເຄື່ອງດື່ມ | ສະຖານີດັບເພີງ | |
| | | - ຫ້ອງອຸປະກອນ, ເຄື່ອງມື ແລະ ເຄື່ອງໃຊ້ | 200 |
| | | ຫ້ອງຄວບຄຸມ ແລະ ຫ້ອງສະວິດ | |
| | | - ບໍລິເວນແຜງຄວບຄຸມ ແລະ ແຜງສະວິດ | |
| | | - ບໍລິເວນດ້ານຫຼັງແຜງຄວບຄຸມ ແລະ ແຜງສະວິດ | 400 |
| | | ຫ້ອງບັນຈຸຫີບຫໍ່ | |
| | | - ບໍລິເວນການບັນຈຸຫີບຫໍ່, ເຮັດເຄື່ອງໝາຍ ແລະ ຈັດສິ່ງ | 200 |
| | | - ບໍລິເວນໂຕະກວດນັບ | 200 |
| | | ໂຮງໂມ້ແປ້ງ | |
| | | - ການເຮັດຄວາມສະອາດ, ການໂມ້ ຫຼື ການບົດ | 200 |
| | | - ການອົບ | 300 |
| | | - ການຄັດເກດແປ້ງ | 400 |
| | | ໂຮງງານນ້ຳຕານ | |
| | | - ການຄັດເກດນ້ຳຕານ | 600 |
| | | ໂຮງງານຜະລິດເຂົ້າໜົມ | |
| | | - ວຽກປະສົມ ແລະ ຕົບແຕ່ງ | 300 |
| | | - ການຕົບແຕ່ງ ແລະ ການເຄືອບນ້ຳຕານ | 400 |
| | | ໂຮງງານອາຫານກະປ໋ອງ | |
| | | - ງານກວດສອບອາຫານ | 600 |

| | | | |
|---|---|---|---|
| | | - ຂະບວນການກຽມອາຫານ (ການເຮັດຄວາມສະອາດ, ການຕົ້ມ ແລະ ອື່ນໆ ) | 400 |
| | | - ຂະບວນການຕົ້ມກັ່ນ | 200 |
| | | - ຂະບວນການຕິດສະຫຼາກດ້ວຍຄວາມໄວສູງ | 400 |
| | | ໂຮງງານຜະລິດຊີ້ນ | |
| | | - ການລອກໜັງ | 200 |
| | | - ການຖອດກະດູກ, ການເຮັດຄວາມສະອາດ, ການບົດ ຫຼື ການຕັດ | 400 |
| | | ໂຮງງານຜະລິດຊອກໂກແລັດ | |
| | | - ການປະສົມ, ການກວນ ຫຼື ການຕົ້ມ | 200 |
| | | - ການປອກເປືອກ, ການຕອງ ຫຼື ການສະກັດແຍກໄຂມັນ, ການບົດ, ການກັ່ນ, ການເຮັດຄວາມສະອາດຖົ່ວ, ການໂມ້,ບົດ ຫຼື ການເຮັດຄີມ | 300 |
| | | - ການຕົບແຕ່ງດ້ວຍມື | 400 |
| 2. | ອຸດສາຫະກຳສິ່ງຖັກແສ່ວ | ໂຮງງານທໍຜ້າໄໝ ແລະ ຜ້າໃຍສັງເຄາະ | |
| | | - ການກໍດ້າຍ, ການຍ້ອມ ຫຼື ການຕໍ່ເສັ້ນດ້າຍ | 400 |
| | | - ການທໍ ແລະ ການຕົບແຕ່ງສຳເລັດ | 800 |
| | | - ການສືບດ້າຍເສັ້ນຢືນ (ເສັ້ນດ້າຍຕາມຄວາມຍາວໃນເຄື່ອງທໍຜ້າ) | 400 |
| | | - ການມ້ວນເສັ້ນດ້າຍ | 800 |
| | | ໂຮງງານທໍຜ້າປັກະເຈົາ | |
| | | - ການທໍ, ການປັ່ນເຄື່ອງແຈັກກາດ ຫຼື ການກໍ | 200 |
| | | - ການຮີດເສັ້ນດ້າຍ | 200 |
| | | ໂຮງງານທໍຜ້າຝ້າຍ ແລະ ຜ້າມີລີນ | |
| | | - ການທໍຜ້າສີເຂັ້ມ ທໍລະອຽດ | 800 |
| | | - ການທໍຜ້າສີອ່ອນ ທໍລະອຽດ | 400 |
| | | - ການທໍຜ້າດິບ | 300 |
| | | - ການສືບດ້າຍ ການແຕ່ງ ຫຼື ການບັນຈຸ | 300 |
| | | - ການລີງດ້າຍຄູ່ | 300 |
| | | - ການກໍດ້າຍ ການຍ້ອມ ການເຮັດກຽວເສັ້ນໃຍ ການຮີດປຸຍ ຫຼື ການປັ່ນ | 200 |
| | | - ການອັດເບສ ການປະສົມເສັ້ນໃຍ ຫຼື ການສ້າງເສັ້ນໃຍ | 800 |
| | | - ການຮ້ອຍຕະກໍ້ | 800 |
| | | - ການກວດສອບດ້ວຍມື | 1.200 |
| | | - ການກວດສອບດ້ວຍຄວາມໄວ | 800 |
| | | ໂຮງງານຍ້ອມຜ້າ | |
| | | - ການຮັບຜ້າ ຫຼື ການກວດຕຳນິຜ້າດິບ | 400 |
| | | - ຂະບວນການຊະນິດປຽກ | 200 |

| | | | |
|---|---|---|---|
| | | - ຂະບວນການຊະນິດແຫ້ງ | 300 |
| | | - ການຈັບຄູ່ສີ (ການທຽບສີ) | 1.200 |
| | | - ການກວດສອບຂັ້ນສຸດທ້າຍ | 1.600 |
| | | ໂຮງງານຕັດຫຍິບເສື້ອຜ້າ | |
| | | - ງານລີດ ຫຼື ການບຳລຸງຮັກສາຜ້າ | 400 |
| | | - ງານຄັດແຍກ ຕັດ ຫຼື ຫຍິບ ຜະລິດຕະພັນສີອ່ອນ | 400 |
| | | - ງານຄັດແຍກ ຕັດ ຫຼື ຫຍິບ ຜະລິດຕະພັນສີປານກາງ | 600 |
| | | - ງານຄັດແຍກ ຕັດ ຫຼື ຫຍິບ ຜະລິດຕະພັນສີເຂັ້ມ | 800 |
| | | - ການກວດສອບ ຫຼື ການຕັດຫຍິບດ້ວຍມື | 1.200 |
| | | ໂຮງງານຜະລິດຖົງຕີນ ຊຸດຊັ້ນໃນ ແລະ ເສື້ອຜ້າໄໝພົມ | |
| | | - ເຄື່ອງຖັກກົມ | 400 |
| | | - ເຄື່ອງຫຍິບຕະເຂັບ ຫຼື ຫຍິບຣິມ | 600 |
| | | - ການປະກອບ | 600 |
| | | - ການຊ່ອມແຊມຜະລິດຕະພັນສີອ່ອນ | 1.600 |
| | | - ການຊ່ອມແຊມຜະລິດຕະພັນເຂັ້ມ | 2.400 |
| | | - ການກວດສອບ ແລະ ການຕົບແຕ່ງຜະລິດຕະພັນສີອ່ອນດ້ວຍມື | 1.200 |
| | | - ການກວດສອບ ແລະ ການຕົບແຕ່ງຜະລິດຕະພັນສີເຂັ້ມດ້ວຍມື | 1.600 |
| | | ໂຮງງານຜະລິດໝວກ | |
| | | - ການຖັກ ການເຮັດຄວາມສະອາດ ການຂຶ້ນຮູບ ການແທກຂະໜາດ ການເຮັດປີກໝວກ ຫຼື ການຕົບແຕ່ງສຳເລັດ | 200 |
| | | - ການຍ້ອມສີ | 300 |
| | | - ການຫຍິບຜະລິດຕະພັນສີອ່ອນ - ປານກາງ | 600 |
| | | - ການຫຍິບຜະລິດຕະພັນສີເຂັ້ມ | 800 |
| | | - ການກວດສອບ | 1.200 |
| | | ໂຮງງານຜະລິດພົມ | |
| | | - ການກໍດ້າຍ ຫຼື ການກຽມດ້າຍເສັ້ນຍືນ | 300 |
| | | - ການອອກແບບ ການຕັດແບບກະດາດ ການຍຶດແບບ ການຕັດ ຫຼື ການຫຍິບຣິມ | 400 |
| | | - ການຖັກ ການປະຊອມ ແລະ ການກວດສອບ | 600 |
| | | ໂຮງງານຊັກລີດ ແລະ ຊັກແຫ້ງ | |
| | | - ການຊັກ, ອົບ | 200 |
| | | - ວຽກຮັບ - ສົ່ງ ແລະ ເຮັດຄວາມສະອາດ | 300 |
| | | - ວຽກລີດ ແລະ ພັບ | 400 |
| | | - ວຽກຄັດແຍກ ແລະ ກວດສອບ | 400 |
| | | - ວຽກປະຊອມ | 600 |

| | | | |
|---|---|---|---|
| 3. | ອຸດສາຫະກຳເຈັຍ ແລະ ສິ່ງພິມ | ໂຮງງານຜະລິດເຈັ້ຍ ແລະ ເຈັ້ຍແຂງ | |
| | | - ການຕີ ຫຼື ການບົດ | 200 |
| | | - ການກວດສອບ ແລະ ການຄັດເລືອກ | 600 |
| | | ໂຮງງານເຮັດກ່ອງ ແລະ ຖົງກະດາດ | |
| | | - ງານເຮັດແຜ່ນລູກຟູກ, ກ່ອງເຈັ້ຍ ຫຼື ພາສະນະບັນຈຸ ແລະ ຖົງເຈັ້ຍ, ຂະບວນການເຄືອບ ແລະ ເຮັດເປັນແຜ່ນ | 200 |
| | | - ວຽກພິມ | 400 |
| | | ໂຮງພິມໜັງສື | |
| | | - ວຽກເຄືອບ, ເຈາະ ຫຼື ຫຍິບເຫຼັ້ມ | 300 |
| | | - ການຫຍິບປົກເຂົ້າເຫຼັ້ມ ຫຼື ວຽກເຄື່ອງຈັກອື່ນ | 400 |
| | | - ການຕົບແຕ່ງ, ການພິມຮູບ ແລະ ປະດັບ | 600 |
| | | ອຸດສາຫະກຳສິ່ງພິມຊະນິດໂຮງຫຼໍ່ | |
| | | - ການເຮັດແມ່ພິມເຈັ້ຍສຳລັບຫຼໍ່ຕົວພິມ, ການແຕ່ງຕົວພິມ ຫຼື ການຫຼໍ່ດ້ວຍເຄື່ອງຈັກ ຫຼື ມື | 300 |
| | | - ຄຸມເຄື່ອງພິມ ຫຼື ການຄັດເລືອກ | 600 |
| | | ໂຮງພິມ | |
| | | ຫ້ອງລຽງພິມ | |
| | | - ເຄື່ອງລຽງພິມອັດຕະໂນມັດ | 300 |
| | | - ລຽງພິມດ້ວຍມື | 600 |
| | | - ການແຕ່ງ ແລະ ອັດຕົວພິມເທິງແທ່ນພິມ | 600 |
| | | - ການພິສູດອັກສອນ | 600 |
| | | ການເຮັດແມ່ພິມຊຸບໂລຫະດ້ວຍໄຟຟ້າ | |
| | | - ການຈຳລອງຕົວພິມທັງໜ້າທີ່ມາຈາກຕົວລຽງ, ການຊຸບດ້ວຍໄຟຟ້າ ຫຼື ການລ້າງ | 300 |
| | | - ການຕົບແຕ່ງສຳເລັດ ຫຼື ການຄົ້ນຫາ | 600 |
| | | ການກັດແມ່ພິມດ້ວຍການຖ່າຍຮູບ ແລະ ການເຮັດແມ່ພິມດ້ວຍໂລຫະ | |
| | | - ການກັດ, ການແກະສະຫຼັກ, ການເຮັດແມ່ພິມດ້ວຍໂລຫະ ຫຼື ການເຮັດແມ່ພິມດ້ວຍການໃຊ້ກົດກັດ | 400 |
| | | - ການຕົບແຕ່ງສຳເລັດ ຫຼື ການຄົ້ນຫາ | 600 |
| | | - ການກວດສອບ | 800 |
| 4. | ອຸດສາຫະກຳ ຜະລິດຕະພັນໄມ້ | ວຽກແກະສະຫຼັກ ແລະ ແກະແມ່ພິມ | |
| | | - ການແກະສະຫຼັກຫີນ ແລະ ເຄື່ອງຈັກ | 600 |
| | | - ການເກາະສະຫຼັກດ້ວຍມື ຫຼື ການແກະແມ່ພິມລະອຽດ | 1.200 |
| | | ວຽກໄມ້ທົ່ວໄປ | |

| | | | |
|---|---|---|---|
| | | - ງານເລື່ອຍ | 200 |
| | | - ການແທກຂະໜາດ, ອອກແບບ ຫຼື ການຂັດກະດາດຊາຍຫຍາບ, ການຕິດກາວ, ການໃຊ້ເຄື່ອງຈັກ ແລະ ໂຕະເຮັດວຽກປານກາງ | 300 |
| | | - ການຕົບແຕ່ງ, ການຂັດກະດາດຊາຍລະອຽດ, ການໃຊ້ເຄື່ອງຈັກ ແລະ ໂຕະເຮັດວຽກລະອຽດ, ການຂັດພື້ນໜ້າໂຕະຕັ່ງ ແລະ ອື່ນໆ | 400 |
| | | ວຽກໄມ້ອັດສະດຸ, ແຜ່ນຕົບແຕ່ງໜ້າ | |
| | | - ການກວດສອບຜະລິດຕະພັນ | 400 |
| | | ໂຮງງານເຮັດເຟີນີເຈີ້ໄມ້ | |
| | | ວຽກເຄື່ອງຈັກ ແລະ ການປະກອບໄມ້ | |
| | | - ວຽກເລື່ອຍ ແລະ ຕັດໄມ້ແບບຫຍາບ | 200 |
| | | - ວຽກທີ່ໃຊ້ເຄື່ອງຈັກ, ຂັດກະດາດຊາຍ ແລະ ການປະກອບ | 400 |
| | | ງານສີມືລະອຽດ | |
| | | - ວຽກຄັດແຍກ ແລະ ກຽມໄມ້ລາຍບາງໆ ຫຼື ປລາສະຕິກສໍາລັບຂັດພື້ນໜ້າໂຕະ, ຕັ່ງ ແລະ ອື່ນໆ | 800 |
| | | - ການຂັດພື້ນໂຕະ, ຕັ່ງ | 400 |
| | | - ການເຂົ້າຮູບ ແລະ ການກວດສອບຂັ້ນສຸດທ້າຍ | 400 |
| | | ການເຮັດເບາະນອນ | |
| | | - ຂັ້ນຕອນການກວດສອບວັດຖຸດິບ | 1.200 |
| | | - ການໃສ່ວັດຖຸດິບ ແລະ ຫຸ້ມ | 400 |
| | | - ການເຮັດປອກໃສ່ໂຕະ ຫຼື ຕັ່ງ | 600 |
| | | - ການຕັດ ແລະ ຫຍິບ | 600 |
| | | ການເຮັດຟູກ ແລະ ບ່ອນນອນ | |
| | | - ການປະກອບ | 400 |
| | | - ການຕິດຂອບ | 600 |
| | | ວຽກທີ່ກ່ຽວກັບເຮັດສີ ໃຊ້ມາດຕະຖານການທາສີ ແລະ ສີດສີໃນອຸດສາຫະກໍາເຄມີ, ວຽກທີ່ກ່ຽວກັບຂ້ອງກັບວຽກໄມ້ໃຊ້ມາດຕະຖານງານໄມ້ທົ່ວໄປ | |
| 5. | ອຸດສາຫະກໍາເຄມີ | ໂຮງງານຜະລິດຢາ ແລະ ສານເຄມີບໍລິສຸດ | |
| | | ການຜະລິດຢາ | |
| | | - ການບົດ, ການປະສົມ, ເຮັດໃຫ້ແຫ້ງ, ການອັດເມັດ, ຂ້າເຊື້ອ, ການກຽມ ແລະ ເຕີມສານລະລາຍ | 400 |
| | | - ການຕິດສະຫຼາກ, ບັນຈຸ ແລະ ການຫໍ່, ການກວດສອບ, ການຜະລິດສານເຄມີບໍລິສຸດ | 400 |
| | | - ການແຕ່ງເຄມີຂັ້ນສຸດທ້າຍ | 400 |
| | | ໂຮງງານຜະລິດສານເຄມີ | |

| | | | |
|---|---|---|---|
| | | - ຂະບວນການຕົ້ມ, ເຮັດໃຫ້ແຫ້ງ, ການຕອງ, ການເຮັດໃຫ້ຕົກພຶກ, ການຟອກສີ, ການສະກັດ<br>- ເຄື່ອງມືອັດ ເກວ ວາວ ແລະ ອື່ນໆ<br>ວຽກທາສີ ແລະ ພົ່ນສີ<br>- ການຈຸ່ມ, ການຮອບ ແລະ ການພົ່ນສີຮອງພື້ນ<br>- ການຂັດຖູ, ການພົ່ນສີ, ທາສີ ແລະ ການຕົບແຕ່ງປົກກະ ຕິ<br>- ການພົ່ນສີ, ທາສີ ແລະ ການຕົບແຕ່ງລະອຽດ<br>- ການພົ່ນສີ, ທາສີ ແລະ ການຕົບແຕ່ງລະອຽດຫຼາຍເປັນພິເສດ ເຊັ່ນ ຕົວຖັງລົດ, ທີບປຽນໂນ ແລະ ອື່ນໆ<br>ໂຮງງານຜະລິດສີ<br>- ເຄື່ອງຈັກອັດຕະໂນມັດທົ່ວໄປ<br>- ການປະສົມສີກຸ່ມພິເສດ<br>- ການປຽບທຽບສີ<br>ໂຮງງານຜະລິດສະບູ<br>- ການຫໍ່, ການບັນຈຸ ແລະ ການຈໍ້າກາ<br>ໂຮງງານຢາສູບ<br>- ການເຮັດໃຫ້ແຫ້ງ ແລະ ວຽກທົ່ວໄປ<br>- ການເຮັດເປັນຊິ້ນ<br>- ການຄັດເລືອກ ແລະ ການແບ່ງເກດ | 200<br><br>100<br><br>200<br>400<br>600<br>800<br><br><br>200<br>600<br>800<br><br>300<br><br>200<br>400<br>600 |
| 6. | ອຸດສາຫະກຳປລາສະຕິກ ແລະ ຢາງ | ໂຮງງານປລາສະຕິກ<br>- ຂະບວນການລິດ<br>- ຂະບວນການອັດ, ສີດ ແລະ ການເປົ່າແມ່ພິມ<br>ການຂຶ້ນໂຄງແຜ່ນ<br>- ການຂຶ້ນຮູບ<br>- ການຕົບແຕ່ງເຮັດໃຫ້ລຽບ ແລະ ການຂັດເງົາ<br>- ການຕິດປະສານ<br>- ການປຽບທຽບສີ ແລະ ການປະກອບ<br>- ການກວດສອບ<br>ວຽກທີ່ກ່ຽວກັບວຽກຜະລິດວັດຖຸດິບປລາສະຕິກໃຊ້ມາດຕະຖານໂຮງງານຜະລິດສານເຄມີໃນອຸດສາຫະກຳເຄມີ<br>ໂຮງງານຜະລິດເຄື່ອງໜັງ<br>- ການເຮັດຄວາມສະອາດ ຫຼື ການຟອກ<br>- ການຕັດ ຫຼື ການຂູດ<br>- ການຕົບແຕ່ງ<br>- ການອັດ, ບິດ ແລະ ມ້ວນໜັງສືອ່ອນ | <br>400<br>300<br><br>300<br>400<br>300<br>800<br>600<br><br><br>200<br>200<br>300<br>300 |

| | | | |
|---|---|---|---|
| | | - ການອັດ, ບິດ ແລະ ມ້ວນໜັງສີເຂັ້ມ<br>- ການຕິດ, ການຫຍິບໜັງສີອ່ອນ<br>- ການຕິດ, ການຫຍິບໜັງສີເຂັ້ມ<br>- ການຄັດເກດ ແລະ ການປຽບທຽບສີໜັງສີອ່ອນ<br>- ການຄັດເກດ ແລະ ການປຽບທຽບສີໜັງສີເຂັ້ມ<br>ໂຮງງານຜະລິດຢາງ<br>- ການເຮັດຢາງລົດ ແລະ ຢາງໃນ<br>- ການກວດສອບ ແລະ ແກ້ໄຂ<br>ໂຮງງານຜະລິດເກີບ<br>- ການຄັດເລືອກ ແລະ ການແບ່ງເກດ<br>- ການກຽມສ່ວນປະກອບ<br>- ການຄັດ, ການຕັດ ຫຼື ການຫຍິບຊິ້ນສ່ວນປະກອບ<br>- ການກຽມພື້ນ, ການໃສ່ແບບໄມ້ ແລະ ເຮັດພື້ນ ຫຼື ການຕົບແຕ່ງສໍາເລັດ | 600<br>400<br>800<br>600<br>1.200<br><br>300<br>600<br><br>1.200<br>800<br>1.200<br>800 |
| 7. | ອຸດສາຫະກໍາຜະລິດໂລຫະ | ໂຮງງານປະກອບເຄື່ອງຈັກ<br>ວຽກຫຍາບ<br>- ການປະກອບເຄື່ອງຈັກກົນໜັກ, ໂຄງ ແລະ ຊິ້ນສ່ວນຂະໜາດໃຫຍ່<br>ວຽກປານກາງ<br>- ວຽກປະກອບຊິ້ນສ່ວນເຄື່ອງຈັກ ແລະ ວຽກຕົວຖັງລົດຍົນ<br>ວຽກລະອຽດ<br>- ວຽກປະກອບຊິ້ນສ່ວນນ້ອຍໆ, ວິທະຍຸ, ອຸປະກອນໂທລະສັບ ຫຼື ສ່ວນປະກອບເຄື່ອງລົດຍົນ<br>ວຽກລະອຽດພິເສດ<br>- ວຽກປະກອບຊິ້ນສ່ວນນ້ອຍຫຼາຍ ຫຼື ການເຮັດເຄື່ອງມືວັດ ເຄື່ອງຈັກກົນທີ່ທ່ຽງຕົງ<br>ໂຮງປະກອບເຄື່ອງບິນ ແລະ ໂຮງສ້ອມແປງ<br>- ການເຈາະ, ການຫຍິບໝຸດ, ທັບນອດ<br>ການຈັດວາງແຜ່ນອາລູມີນຽມ ແລະ ການເຮັດຝາ, ການເຮັດປີກ, ການເຮັດກະບັງລົມ, ການເຊື່ອມ, ການປະກອບຍ່ອຍ, ການປະກອບຂັ້ນສຸດທ້າຍ ຫຼື ການກວດສອບ<br>- ວຽກທົດສອບເຄື່ອງຈັກ<br>ໂຮງກຶ່ງ ເຈາະ, ໃສ່ໂລຫະ ແລະ ໂຮງປັ້ນເຄື່ອງ<br>- ວຽກທີ່ໃຊ້ໂຕະເຮັດວຽກ ແລະ ເຄື່ອງຈັກແບບຫຍາບ, ການນັບ ຫຼື ການກວດສອບຊິ້ນສ່ວນອາໄຫຼ່ໃນຄັງເກັບ (ໂດຍທົ່ວໄປຂະໜາດໃຫຍ່ກວ່າ 750 ໄມໂຄແມັດ) | <br><br>200<br><br>400<br><br>800<br><br>1.600<br><br>400<br><br>600<br><br>200 |

| | | | |
|---|---|---|---|
| | | - ວຽກທີ່ໃຊ້ໂຕະເຮັດວຽກເຄື່ອງຈັກແບບປານກາງ, ວຽກເຄື່ອງຈັກກົນອັດຕະໂນມັດຕາມປົກກະຕິ, ການເຈຍແບບຫຍາບ ຫຼື ການຂັດ ແລະ ຂັດເງົາປານກາງ (ໂດຍທົ່ວໄປຂະໜາດໃຫຍ່ກວ່າ 125 ໄມໂຄແມັດ)<br>- ວຽກທີ່ໃຊ້ໂຕະເຮັດວຽກ ແລະ ເຄື່ອງຈັກແບບລະອຽດ, ງານເຈຍປານກາງ ຫຼື ການຂັດ, ການຂັດເງົາລະອຽດ(ໂດຍທົ່ວໄປຂະໜາດໃຫຍ່ກວ່າ 25 ໄມໂຄແມັດ)<br>- ວຽກທີ່ໃຊ້ໂຕະເຮັດວຽກ ແລະ ເຄື່ອງຈັກແບບລະອຽດພິເສດ, ວຽກເຈຍລະອຽດ ຫຼື ວຽກເຮັດເຄື່ອງມື ແລະ ແກະແມ່ພິມ (ໂດຍທົ່ວໄປຂະໜາດນ້ອຍກວ່າ 25 ໄມໂຄແມັດ) | 400<br><br><br><br>800<br><br><br><br>1.600 |
| | | ງານເຊື່ອມ ແລະ ບັດກຣີ<br>- ການເຊື່ອມດ້ວຍກາສ, ໄຟຟ້າ ຫຼື ທອງເຫຼືອງ<br>- ການເຊື່ອມໄຟຟ້າສະເພາະແຫ່ງ ແລະ ບັດກຣີທຳມະດາທົ່ວໄປ<br>- ການເຊື່ອມໄຟຟ້າສະເພາະແຫ່ງ ແລະ ບັດກຣີຂະໜາດນ້ອຍ<br>- ການເຊື່ອມໄຟຟ້າສະເພາະແຫ່ງ ແລະ ບັດກຣີຂະໜາດນ້ອຍຫຼາຍ ເຊັ່ນ ຫຼອດວິທະຍຸ ແລະ ອື່ນໆ<br>ໂຮງງານຜະລິດລົດ<br>- ຂະບວນການປະກອບທົ່ວໄປ ຫຼື ການປະກອບໂຄງລົດ<br>- ການກວດສອບຂັ້ນສຸດທ້າຍ<br>- ວຽກຕົບແຕ່ງ, ວຽກເຮັດຕົວຖັງ ຫຼື ປະກອບຕົວຖັງ<br>ວຽກທີ່ກ່ຽວກັບງານສີ ໃຊ້ມາດຕະຖານງານທາສີ ແລະ ພົ່ນສີໃນອຸດສາຫະກຳເຄມີ, ວຽກທີ່ກ່ຽວກັບງານເບາະນວມໃຊ້ມາດຕະຖານການເຮັດເບາະນວມຂອງໂຮງ ງານເຮັດເຟີນີເຈີ້ໄມ້ໃນອຸດສາຫະກຳຜະລິດຕະພັນໄມ້,<br>ໂຮງງານຜະລິດເຄື່ອງໄຟຟ້າ<br>- ຂະບວນການແຊ່ ແລະ ການເຮັດໄມກາ<br>- ການເຮັດຂົດລວດ ຫຼື ຂະບວນການຫຸ້ມສະນວນໂດຍທົ່ວໄປ<br>- ການເຮັດຂົດລວດ ຫຼື ຂະບວນການຫຸ້ມສະນວນໂດຍອຸປະກອນລະອຽດ<br>ວຽກທີ່ກ່ຽວກັບງານກົ່ງ, ເຈາະ ຫຼື ໃສ່ໂລຫະໃຊ້ມາດ ຕະຖານໂຮງກົ່ງ, ເຈາະ ໄສໂລຫະ ແລະ ໂຮງປັບເຄື່ອງ, ວຽກທີ່ກ່ຽວກັບງານຜະລິດໂລຫະແຜ່ນ, ໃຊ້ມາດຕະ ຖານໂຮງງານຜະລິດໂລຫະແຜ່ນໃນອຸດສາຫະກຳເຫຼັກ, ໂຮງງານຜະລິດ ຫຼື ປະກອບເຄື່ອງປະດັບ<br>- ການເຈຍລະໄນເພັດ, ພອຍ, ຂັດເງົາ ຫຼື ຝັງເພັດພອຍ | <br>200<br>400<br>800<br>1.200<br><br><br>400<br>600<br>400<br><br><br><br><br><br>300<br>400<br>800<br><br><br><br><br><br>1.600 |
| 8. | ອຸດສະຫະກຳເຫຼັກ | ໂຮງງານຜະລິດເຫຼັກ (ເຫຼັກເສັ້ນ, ເຫຼັກແຜ່ນ ແລະ ລວດ) | |

| | | | |
|---|---|---|---|
| | | - ວຽກກວດສອບແຜ່ນເຫຼັກ<br>ໂຮງງານຜະລິດໂລຫະແຜ່ນ<br>- ວຽກທີ່ເຮັດດ້ວຍເຄື່ອງຈັກ ຫຼື ເທິງໂຕະເຮັດວຽກ, ປໍ້າກາ ການເສືອນ, ການລີດ, ການເຊື່ອມໄຟຟ້າ ແລະ ມ້ວນ<br>ໂຮງງານຕີເຫຼັກ<br>- ວຽກຕີ ແລະ ເຊື່ອມ<br>ໂຮງງານຜະລິດເຫຼັກກໍ່ສ້າງ<br>- ງານເຮັດເຄື່ອງໝາຍ | 400<br><br>400<br><br><br>200<br><br>400 |
| 9. | ອຸດສາຫະກໍາໂລຫະ | ໂຮງງານຜະລິດເຄື່ອງປັ້ນດິນເຜົາ ແລະ ເຊລາມິກ<br>- ວຽກເຄືອບເງົາ ຫຼື ລົງຢາ<br>- ວຽກລົງສີ ແລະ ເຮັດໃຫ້ຂຶ້ນເງົາ<br>ໂຮງຫຼໍ່ໂດຍໃຊ້ແມ່ພິມຊາຍ<br>- ການເທໂລຫະຫຼອມລະລາຍໃສ່ແມ່ພິມ ແລະ ການຖອກແມ່ພິມ<br>- ການແຕ່ງ ແລະ ການຫຍິງຊາຍ<br>- ການເຮັດແມ່ພິມຫຍາບ<br>- ການເຮັດແມ່ພິມລະອຽດ ແລະ ການກວດສອບ<br>ວຽກເຮັດແກ້ວ<br>- ການປໍ້າຂຶ້ນຮູບ, ເປົ່າແກ້ວ ແລະ ຂັດເງົາ<br>- ການໂມ, ການຕັດ ຫຼື ການຕັດແກ້ວຕາມຂະໜາດ<br>- ການໂມລະອຽດ, ແກະສະຫຼັກ, ຕົບແຕ່ງ, ເຮັດມຸມ ແລະ ການກວດສອບ<br>- ການກວດສອບຢ່າງລະອຽດ ແລະ ຕັດແຕ່ງ | <br>400<br>600<br><br>200<br>300<br>200<br>400<br><br>200<br>300<br>400<br><br>800 |
| 10. | ອຸດສາຫະກໍາອື່ນ | ໂຮງຜະລິດກະແສໄຟຟ້າ<br>- ການປະຕິບັດງານທົ່ວໄປຂອງໂຮງກັງຫັນ<br>- ການບໍາລຸງຮັກສາກັງຫັນ<br>- ເຄື່ອງມືວັດເກວວາວ (ບໍ່ລວມອາຄານ ໝໍ້ນໍ້າ)<br>ວຽກທີ່ກ່ຽວກັບໝໍ້ນໍ້າໃຊ້ມາດຕະຖານອາຄານໝໍ້ນໍ້າ<br>ອາຄານໝໍ້ນໍ້າ<br>- ເຄື່ອງມືວັດເກວ<br>ສະຖານນີບໍລິການນໍ້າມັນ<br>- ວຽກບໍລິການສ້ອມແປງ<br>ຫ້ອງປະຕິບັດການທົດລອງ ແລະ ຫ້ອງທົດສອບ<br>- ການປັບທຽບມາດຕະຖານສາກົນ, ເຄື່ອງຈັກກົນທີ່ທ່ຽງຕົງ, ເຄື່ອງທົດສອບ ແລະ ເຄື່ອງມືວັດ | <br>300<br>600<br><br><br><br>200<br><br>400<br><br>800 |
| 11. | ວຽກສໍານັກງານ | ຫ້ອງຄອມພິວເຕີ້ | |

| | | | |
|---|---|---|---|
| | | - ວຽກບັນທຶກຂໍ້ມູນ<br>- ບໍລິເວນທີ່ສະແດງຂໍ້ມູນ (ຈໍພາບ ແລະ ເຄື່ອງພິມ)<br>ຫ້ອງທຸລະການ<br>- ວຽກພິມດີດ, ການຂຽນ, ການອ່ານ ແລະ ການຈັດເກັບເອກະສານອື່ນທີ່ກ່ຽວຂ້ອງ<br>- ການເຮັດສີຂອງຊິ້ນງານກັບສີຂອງພື້ນຜິວກົມກືນກັນ | 600<br>600<br><br>400<br><br>600 |

- ມາດຕະຖານທຽບຄຽງຄວາມເຂັ້ມຂອງແສງສະຫວ່າງ ທີ່ໃຫ້ຜູ້ອອກແຮງງານເຮັດວຽກ

| ລ/ດ | ການໃຊ້ສາຍຕາຕາມລັກສະນະຂອງວຽກ | ຄວາມເຂັ້ມຂອງແສງສະຫວ່າງ (ລັກສ) | ຕົວຢ່າງ |
|---|---|---|---|
| 1. | ວຽກລະອຽດສູງຫຼາຍເປັນພິເສດ | 2.400 ຫຼື ຫຼາຍກວ່າ | - ການກວດສອບຊິ້ນວຽກທີ່ມີຂະໜາດນ້ອຍ (ເຊັ່ນ ເຄື່ອງມືທີ່ມີຂະໜາດນ້ອຍຫຼາຍ)<br>- ການເຮັດເຄື່ອງປະດັບ ແລະ ຜະລິດໂມງໃນຂະບວນການທີ່ມີຂະໜາດນ້ອຍ<br>- ການຖັກລອງເທົ້າ, ເສື້ອຜ້າທີ່ມີສີເຂັ້ມ ລວມທັງການສ້ອມແຊມສິນຄ້າທີ່ມີສີເຂັ້ມ |
| 2. | ວຽກລະອຽດສູງຫຼາຍ | 1.600 | - ວຽກລະອຽດທີ່ຕ້ອງເຮັດເທິງໂຕະ ຫຼື ເຄື່ອງຈັກ ເຊັ່ນ ເຮັດເຄື່ອງມື ຫຼື ແມ່ພິມ (ຂະໜາດນ້ອຍກວ່າ 25 ໄມໂກຣແມັດ) ກວດວັດແທກ ແລະ ກວດສອບຊິ້ນສ່ວນທີ່ມີຂະໜາດນ້ອຍ ແລະ ຊິ້ນງານທີ່ມີສ່ວນປະກອບຂະໜາດນ້ອຍ<br>- ການສ້ອມແຊມສິນຄ້າສິ່ງທໍ ສິ່ງຖັກທີ່ມີສີອ່ອນ<br>- ການກວດສອບ ແລະ ຕົກແຕ່ງຊິ້ນສ່ວນຂອງສິນຄ້າ, ສິ່ງທໍ, ສິ່ງຖັກ ທີ່ມີສີເຂັ້ມ<br>- ການວັດແທກລະຍະຄວາມຍາວຂັ້ນສຸດທ້າຍ |
| 3. | ວຽກລະອຽດສູງ | 1.200 | - ການກວດສອບການຕັດຫຍິບເສື້ອຜ້າດ້ວຍມື<br>- ການກວດສອບ ແລະ ການຕົກແຕ່ງຊິ້ນສ່ວນສິນຄ້າສິ່ງທໍ, ສິ່ງຖັກ ຫຼື ເສື້ອຜ້າທີ່ມີສີອ່ອນຂັ້ນສຸດທ້າຍດ້ວຍມື<br>- ການແບ່ງເກຣດ ແລະ ທຽບສີຂອງໜັງທີ່ມີສີເຂັ້ມ<br>- ການທຽບສີໃນວຽກຍ້ອມຜ້າ |
| | | 800 | - ການລະບາຍສີ, ພົ່ນສີ ແລະ ຕົກແຕ່ງຊິ້ນງານທີ່ລະອຽດຫຼາຍເປັນພິເສດ |

| | | | |
|---|---|---|---|
| | | | - ການທາບສີທີ່ລະບາຍຊິ້ນງານ<br>- ວຽກຍ້ອມສີ<br>- ວຽກລະອຽດທີ່ເຮັດເທິງໂຕະ ແລະ ບ່ອນເຄື່ອງຈັກ (ຂະໜາດນ້ອຍກວ່າ 25 ໄມໂກຣແມັດ) ການກວດສອບວຽກລະອຽດ (ເຊັ່ນ ກວດ, ປັບ ຄວາມຖືກຕ້ອງຂອງສະເກລ, ກົນໄກ ແລະ ເຄື່ອງມືທີ່ຕ້ອງການຄວາມຖືກຕ້ອງທ່ຽງຕົງ) |
| 4. | ວຽກລະອຽດປານກາງ | 600 | - ການເຮັດວຽກສຳນັກງານທີ່ມີສີຕິດກັນນ້ອຍ<br>- ວຽກວາດພາບ ຫຼື ຂຽນແບບລະບາຍສີ, ພິມສີ ຫຼື ຕົກແຕ່ງສີງານທີ່ລະອຽດ<br>- ວຽກພິສູດອັກສອນ<br>- ການກວດສອບຂັ້ນສຸດທ້າຍໃນໂຮງງານຜະລິດຢືນ<br>- ວຽກບັນທຶກຂໍ້ມູນທາງຈໍພາບ. |
| 5. | ວຽກລະອຽດນ້ອຍ | 400 | - ວຽກຂະໜາດປານກາງທີ່ເຮັດຢູ່ເທິງໂຕະ ຫຼື ເຄື່ອງຈັກ (ມີຂະໜາດນ້ອຍເຖິງ 125 ໄມໂກຣແມັດ)<br>- ວຽກປະຈຳໃນສຳນັກງານ ເຊັ່ນ ການພິມ, ການຈັດເກັບແຟ້ມ ຫຼື ການຂຽນ<br>- ການກວດສອບວຽກທີ່ມີຂະໜາດປານກາງ<br>- ການປະກອບລົດຍົນ ແລະ ຕົວຖັງ<br>- ການເຮັດງານໄມ້ຢ່າງລະອຽດເທິງໂຕະ ຫຼື ບ່ອນເຄື່ອງຈັກ<br>- ການປະດິດ ຫຼື ແບ່ງຂະໜາດໂຄງສ້າງເຫຼັກ<br>- ວຽກສອບຖາມ ຫຼື ວຽກປະຊາສຳພັນ |
| | | 300 | - ການຂຽນ ຫຼື ອ່ານກະດານດຳ ຫຼື ແຜ່ນຊາດໃນຫ້ອງຮຽນ<br>- ວຽກຮັບ ແລະ ຈ່າຍເສື້ອຜ້າ<br>- ວຽກຮ້ານຂາຍຢາ<br>- ການເຮັດວຽກໄມ້ຊິ້ນງານຂະໜາດປານກາງຊຶ່ງເຮັດຢູ່ເທິງໂຕະ ຫຼື ເຄື່ອງຈັກ<br>- ວຽກບັນຈຸນ້ຳລົງກວດ ຫຼື ກະປ໋ອງ<br>- ວຽກທາກາວ, ເຈາະຮູ ແລະ ຫຍິບປຶ້ມໜັງສື<br>ວຽກກຽມອາຫານ, ປຸງອາຫານ ແລະ ລ້າງຈານ |

| | | | |
|---|---|---|---|
| 6. | ວຽກລະອຽດນ້ອຍຫຼາຍ | 200 | - ວຽກຫຍາບທີ່ເຮັດຢູ່ເທິງໂຕະ ຫຼື ເຄື່ອງຈັກ (ຂະໜາດໃຫຍ່ຕົ້ນສະບັບກວ່າ 650 ໄມໂກຣແມັດ) ການກວດວຽກຫຍາບດ້ວຍສາຍຕາ, ການນັບ ຫຼື ການກວດເຊັກສິ່ງຂອງທີ່ມີຂະໜາດໃຫຍ່ໃນຫ້ອງເກັບເຄື່ອງ |

- ມາດຕະຖານຄວາມເຂັ້ມຂອງແສງສະຫວ່າງບໍລິເວນໂດຍຮອບ ທີ່ໃຫ້ຜູ້ອອກແຮງງານເຮັດວຽກໂດຍສາຍຕາເບິ່ງສະເພາະຈຸດໃນການປະຕິບັດງານ (ລັກສ)

| ລ/ດ | ພື້ນທີ່ 1 | ພື້ນທີ່ 2 | ພື້ນທີ່ 3 |
|---|---|---|---|
| 1. | 1.000 - 2.000 | 300 | 200 |
| 2. | ຫຼາຍກວ່າ 2.000 - 5.000 | 600 | 300 |
| 3. | ຫຼາຍກວ່າ 5.000 - 10.000 | 1.000 | 400 |
| 4. | ຫຼາຍກວ່າ 10.000 | 2.000 | 600 |

ພື້ນທີ່ 1 ໝາຍເຖິງ ຈຸດທີ່ໃຫ້ຜູ້ອອກແຮງງານເຮັດວຽກ ໂດຍສາຍຕາເບິ່ງສະເພາະຈຸດໃນການປະຕິບັດງານ

ພື້ນທີ່ 2 ໝາຍເຖິງ ບໍລິເວນຖັດຈາກບ່ອນທີ່ໃຫ້ຜູ້ອອກແຮງງານຄົນໃດຄົນໜຶ່ງເຮັດວຽກໃນລັດສະໝີທີ່ຜູ້ອອກແຮງງານຢືນເຖິງ

ພື້ນທີ່ 3 ໝາຍເຖິງ ບໍລິເວນໂດຍຮອບທີ່ຕິດພື້ນທີ່ 2 ທີ່ມີການປະຕິບັດງານຂອງຜູ້ອອກແຮງງານຄົນໃດຄົນໜຶ່ງ